Ottawa County Health Department

# ຄວາມຈິງຕໍ່ມວນຊົນ

## ພະຍາດຄໍຕີບ [DIPTHERIA]

**ພະຍາດຄໍຕີບຄືຫຍັງ?**

ພະຍາດຄໍຕີບເປັນພະຍາດທີ່ເກີດຈາກແບັກແທເລຍເຊິ່ງກະທົບກະເທືອນເຖິງອານິດານ, ຄໍ, ດັງ ຫລື ຜິວໜັງ.

**ພະຍາດຄໍຕີບແຜ່ລາມແນວໃດ?**

ພະຍາດຄໍຕີບອາດຈະແຜ່ລາມຫາຄົນອື່ນຜ່ານຂີ້ມູກຈາກດັງ, ຮູຄໍ, ຜິວໜັງ, ຕາ ແລະ ບາດແຜ່ຕາມຜິວໜັງຂອງຄົນທີ່ມີເຊື້ອໂຣກ.

**ອາການບາງຢ່າງມີຫຍັງແດ່?**

ອາການອາດຈະຮ່ວມດ້ວຍ:

- ເຈັບຄໍ
- ມີເຍື່ອຫຸ້ມສີຂີ້ເທົ່າຢູ່ເບື້ອງຫລັງຂອງຮູຄໍ
- ໜາວສັ່ນ
- ຄີງຮ້ອນ
- ຕ່ອມໃນຮູຄໍໄຄ່
- ຮູ້ສຶກເຈັບປວດຕາມຜິວໜັງ

**ຈະກວດພົບພະຍາດຄໍຕີບໄດ້ແນວໃດ?**

ໂດຍການກວດເບິ່ງ (ເຍື່ອຫຸ້ມສີຂີ້ເທົ່າຢູ່ເບື້ອງຫລັງຂອງຮູຄໍ) ແລະ ການກວດເບິ່ງໃນຫ້ອງວິໄຈ

**ຈະຮັກສາພະຍາດຄໍຕີບໄດ້ດ້ວຍວິທີໃດ?**

ກິນຢາຕ້ານເຊື້ອ ແລະ ຢາຕ້ານເຊື້ອແກ້ພິດຂອງພະຍາດຄໍຕີບ.

**ຈະປ້ອງກັນຈາກພະຍາດຄໍຕີບດ້ວຍວິທີໃດ?**

ມີຢາສັກເພື່ອປ້ອງກັນພະຍາດຄໍຕີບນີ້. ຕາມທຳມະດາແລ້ວຄວນຈະສັກຢາຕອນອາຍຸ 2, 4, 6, ແລະ 15 ຫາ 18 ເດືອນ ແລະ ລະຫວ່າງ 4 ຫລື 6 ປີ. ເມື່ອອາຍຸໃຫຍ່ຂື້ນຄວາມຕ້ານທານເຊື້ອໂລກນີ້ລົດໜ້ອຍລົງ, ດັ່ງນັ້ນມັນເປັນສິ່ງສຳຄັນສຳລັບຜູ້ໃຫຍ່ທີ່ຄວນຈະສັກຢາຕ້ານທ່ານທຸກໆ 10 ປີ.

**ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ພະຍາດຄໍຕີບ ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/001608.htm

12251 James St., Suite 400
Holland, MI 49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org